ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ນະຄອນຫລວງວຽງຈັນ, ວັນທີ 28.12.2022

ບົດບັນທຶກກອງປະຊຸມ

ກອງປະຊຸມກຸ່ມວິຊາການກ່ຽວກັບການສຳຫຼວດ ແລະ ກວດກູ້ ລບຕ ປະຈຳໄຕມາດ 04 ປີ 2022

I. ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການສຳຫຼວດກວດກູ້ ລບຕ ທີ່ໄດ້ໄຂຂຶ້ນໃນເວລາ 08:30 ຫາ 16:00 ໃນວັນທີ 23 ທັນວາ ປີ 2022 ທີ່ຫ້ອງປະຊຸມສູນຝຶກອົບຮົມແນວລາວສ້າງຊາດ, ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ແລະ ມີຜູ້ເຂົ້າຮ່ວມຄື: ຫົວໜ້າໜ່ວຍງານສຳຫລວດ-ກວດກູ້, ໜ່ວຍງານ ຄຸ້ມຄອງຄຸນນະພາບ, ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຫ້ອງການ ຄຊກລ, ຕາງໜ້າຈາກ 06 ອົງການມະນຸດສະທຳ (ອົງການເອັນພີເອ, ອົງການຮາໂລທຣັສ, ອົງການເຮັຈໄອ, ອົງການແມັກປະຈຳ ສປປ ລາວ ແລະ ກອງກວດກູ້ເພື່ອມະນຸດສະທຳ 58), ຊ່ຽວຊານຈາກອົງການສະຫະປະຊາຊາດ, ບໍລິສັດເທທາເທັກ ແລະ ບໍລິສັດເກັບກູ້ລະເບີດ ແລະ ບັນດາຕາງໜ້າ ບໍລິສັດບໍລິສັດເຂົ້າຮ່ວມ.

II. ຈຸດປະສົງ

ເພື່ອສືບຕໍ່ທົບທວນຄືນບັນຫາທີ່ຍັງຄ້າງຄາໃນໄຕມາດທີ່ຜ່ານມາ, ປຶກສາຫາລືບັນຫາກ່ຽວກັບການລາຍງານ, ຂະບວນການເກັບກຳ ແລະ ການລາຍງານ, ການເພີ່ມພື້ນທີ່ກວດກູ້, ລາຍງານວຽກກ່ຽວກັບການສຳຫຼວດກວດກູ້ ແລະ ສະຫຼຸບລາຍງານຜະຂອງຜົນສຳເລັດການປະຕິບັດງານຕ່ລະອົງການປະຕິບັດງານ ພ້ອມທັງປະກອບຄຳຄິດຄຳເຫັນກ່ຽວກັບຂໍ້ສະເໜີ ແລະ ບັນຫາອື່ນໆ ທີ່ປິ່ນອ້ອມໃນກອງປະຊຸມກຸ່ມວິຊາການ.

III. ເນື້ອໃນກອງປະຊຸມ

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 08:30 ໂມງ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດ, ກອງປະຊຸມໄດ້ຮັບຊາບ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

- ທວນຄືນກອງປະຊຸມວິຊາການກ່ຽວກັບການສຳຫຼວດກວດກູ້ ລບຕ ໃນໄຕມາດທີ່ຜ່ານມາ.
- ລາຍງານຄວາມຄືບໜ້າ ແລະ ສະຫຼຸບຕົວລາຄາ ຜົນຂອງການຈັດຕັ້ງປະຕິບັດວຽກງານ ສຳຫຼວດ, ເກັບກູ້ ລບຕ ໄຕມາດ 4 ປີ 2022 , ສັງລວມ ທຸກອົງການປະຕິບັດງານບໍ່ສາມາດສຳເລັດແຜນການສຳຫຼວດ-ເກັບກູ້ ລບຕ ໄດ້ຕາມແຜນທີ່ກຳນົດ, ອົງການປະຕິບັດງານມີຂໍ້ອ້າງຫຼາຍເຫດຜົນທີ່ກະທົບຕໍ່ແຜນວຽກເຊັ່ນ: ຊ່ວງຕົ້ນປີ 2022 ການຢຸດເຮັດວຽກບາງແຂວງຍ້ອນການລະບາດຮອບໃໝ່ຂອງພະຍາດ COVID-19, ບາງໂຄງການໄດ້ຮັບບົດບົດບັນທຶກຄວາມເຂົ້າໃຈຊັກຊ້າ, ຍ້ອນສະພາບດິນຟ້າອາກາດ ແລະ ພື້ນທີ່ກວດກູ້ມີຜົນກະທົບສິ່ງເຈືອປົນຫຼາຍ ແລະ ເຫດຜົນອື່ນໆ.
- ປຶກສາຫາລືແຜນວຽກ ສຳຫຼວດ-ກວດກູ້ ລບຕ ປີ 2023 . ກອງປະຊຸມໄດ້ຍົກໃຫ້ເຫັນຕົວເລກຄາດໝາຍສູ້ຊົນໃນການກວດກູ້ ລບຕ 10.000 ຮຕ/ປີ, ຖ້າທຽບໃສ່ຄວາມສາມາດ ແລະ ທຶນທີ່ສະໜັບສະໜຸນ ຫຼາຍ

ອົງການປະຕິບັດງານ ກໍມີຄຳເຫັນວ່າ ເປັນຕົວເລກຂ້ອນຂ້າງສູງ ແລະ ເປັນສິ່ງທ້າທາຍຫຼາຍ. ລໍຖ້າຕົວເລກຄາດໝາຍທີ່ຈະໄດ້ແບ່ງປັນໃຫ້ແຕ່ລະແຂວງໃນກອງປະຊຸມວາງແຜນປີ 2023 ທີ່ເມືອງວັງວຽງ.

- ເຄື່ອງກວດລະເບີດ ແລະ ເຄື່ອງມືຮັບໃຊ້ໃນການເກັບກູ້ ແລະ ທຳລາຍ ລບຕ ໃນຂະແໜງການ ປະກອນບາງລາຍການສັ່ງຊື້ ແລະ ນຳເຂົ້າມາບໍ່ຖືກນຳໃຊ້ຍ້ອນບໍ່ໄດ້ສຶກສາຂໍ້ມູນລະອຽດທີ່ຈະນຳໃຊ້ໃນຂະແໜງການ ມີຫຼາຍອົງການສັ່ງຊື້ເຂົ້າມາແຕ່ບໍ່ຖືກນຳໃຊ້ ສະນັ້ນ, ເລີ່ມຈາກນີ້ໄປຖ້າອົງການໃດຈະສັ່ງຊື້ເຄື່ອງກວດກລະເບີດແມ່ນໃຫ້ຜ່ານ ຄຊກລ ອະນຸຍາດກ່ອນ ພ້ອມກັນນັ້ນ, ເຄື່ອງທີ່ເປ່ເພໃຊ້ການບໍ່ໄດ້ ສະເໜີຫາພາກສ່ວນກ່ຽວຂ້ອງເພື່ອສຳລະສະສາງ ບໍ່ໃຫ້ມອບ, ຖ້າຈະມອບເອົາເຄື່ອງທີ່ຍັງໃຊ້ການໄດ້ເທົ່ານັ້ນ.
- ຄວາມຄືບໜ້າ ຮ່າງເອກະສານຄັດເລືອກບຸລິມະສິດ ໜ້າວຽກການເກັບກູ້ ລບຕ ແຫ່ງຊາດ ປະຈຸບັນ ຫ້ອງການ ຄຊກລ ສຳເລັດໃນການຮ່າງເປັນພາສາລາວ ເພື່ອປັບປຸງ ແລະ ຈະສົ່ງໃຫ້ຜູ້ເຂົ້າຮ່ວມປະຊຸມຊາບ ແລະ ມີຄຳເຫັນດ້ານວິຊາການພາຍຫຼັງທີ່ແປເປັນພາສາອັງກິດ.
- ລາຍງານຜົນຄວາມຄືບໜ້າໃນການປັບປຸງມາດຕະຖານແຫ່ງຊາດ ວ່າດ້ວຍການປະຕິບັດງານ ໄດ້ກະກຽມຈັດກອງປະຊຸມຢູ່ວັງວຽງຄາດວ່າອາທິດໜ້າຈະໄດ້ຮັບຄຳຄິດເຫັນຈາກຜູ້ແທນກອງປະຊຸມ.
- ລາຍງານ ເຫດການ ລະເບີດລູກຫວ່ານແຕກດ້ວຍຕົວມັນເອງ, ທີມງານຄຸ້ມຄອງຄຸນນະພາບ ແລະ ເກັບກູ້ໄດ້ລົງສືບສວນເບິ່ງຕົວຈິງເຫັນວ່າເຫດການດັ່ງກ່າວເຄີຍເກີດຢູ່ຫຼາຍຄັ້ງໃນໄລຍະຜ່ານມາ ຢູ່ຫຼາຍແຂວງ, ພ້ອມກັນນັ້ນກໍຍັງໄດ້ທົບທວນຄືນມາດຕະຖານການປະຕິບັດງານ, ແນະນຳວິທີປ້ອງກັນ ແລະ ຂໍ້ຄວນລະມັດລະວັງເມື່ອເວລາພົບເຫັນໃນເວລາດຳເນີນການກວດກູ້.
- ການກະກຽມທຳບົ່ມໃຫ່ຍ MK 82 , FMU 54 B and 904 ຢູ່ ບ້ານເສັດຄົດ ເມືອງປາກຊ່ອງ ແຂວງຈຳປາສັກ.ວິຊາການທຳລາຍຂັ້ນສູງຂອງອົງການເອັນພີເອ ໄດ້ນຳສະເໜີ ວິທີການ ແລະ ວາງແຜນໃນການທຳລາຍ ພ້ອມກັນນັ້ນ ກໍໄດ້ສະເໜີຕໍ່ກອງປະຊຸມ ຖ້າພາກສ່ວນໃດຫາກມີຂໍ້ແນະນຳດີໆແມ່ນສາມາດເຂົ້າຮ່ວມໃນການທຳລາຍໃນຄັ້ງນີ້ ອົງການເອັນພີເອຍິນດີຕ້ອນຮັບ.
- ສັງລວມວຽກງານກວດກາຄຸນນະພາບຂອງສະໜາມກວດກູ້ ລບຕ ປະຈຳໄຕມາດ 4. ໃນໄຕມາດນີ້ການລົງກວດກາຄຸນນະພາບຂອງບັນດາອົງການປະຕິບັດງານ ເຫັນວ່າບໍ່ມີຂໍ້ຜິດພາດໃດໆ ຕໍ່ມາດຕະຖານການປະຕິບັດງານ.
- ລາຍງານຜົນການທົດລອງເຄື່ອງກວດລະເບີດ, ການຕັ້ງຄ່າ ເຄື່ອງກວດລະເບີດ ຮ່ວມກັບອົງການ HALO
- ລາຍງານການທົດລອງຕົວຈິງເສື້ອກັນສະເກັດ(PPE) HALO Trust.
- ລາຍງານຜົນການລົງສືບສວນສອບສວນສະຖານທີ່ເຫດການ ລະເບີດບົ່ມບີ້ 26/36 ແຕກຂຶ້ນດ້ວຍຕົວມັນເອງໃນສະໜາມກວດກູ້ NPA ແລະ ແນະນຳວິທີປ້ອງກັນ.
- ລາຍງານຜົນການຕິດຕາມ ຊຸກຍູ້ວຽກງານ ສຳຫຼວດ-ເກັບກູ້ ລບຕ ປະຈຳໄຕມາດ 4. ຜ່ານການລົງຕິດຕາມບັນດາອົງການປະຕິບັດງານ ການປະຕິບັດວຽກງານສຳຫຼວດ-ເກັບກູ້ ລບຕ ປະຕິບັດໄດ້ດີແລະ ສອດຄ່ອງກັບມາດຕະຖານ, ການປະຕິບັດດ້ານຄວາມປອດໄພເຮັດໄດ້ດີ. ບາງອົງການປະຕິບັດງານຕ້ອງເພີ່ມທັກສະໃນການອະທິບາຍກ່ຽວກັບໜ້າວຽກທີ່ຕົນຮັບຜິດຊອບໃຫ້ແຂກທີ່ມາຢ້ຽມຢາມໃຫ້ມີຄວາມຄ່ອງແຄ້ວ ແລະ ແບບເປັນມືອາຊີບ.
- ລາຍງານການທຳລາຍ ລບຕ ນອກແຜນ ໃນເຂດຊຸມຊົນ ປະຈຸບັນ ຫ້ອງການ ຄຊກລ ໄດ້ສົມທົບກັບ ທີມງານວິຊາການກອງກວດກາກູ້ ລບຕ ມະນຸດສະທຳກອງທັບ ເຄື່ອນໄຫວທຳລາຍ ລບຕ ແບບສຸກເສີນໃນບັນດາແຂວງທີ່ບໍ່ມີອົງການປະຕິບັດງານດ້ານ ລບຕ ເຮັດວຽກຢູ່ ແລະ ບາງແຂວງທີ່ຂາດງົບປະມານສຳເລັດເປັນສ່ວນຫຼາຍ ແຕ່ຍັງຈະຕ້ອງດຳເນີນສືບຕໍ່.

- ໜັງສືແຈ້ງການລົງເຄື່ອນໄຫວວຽກງານ ລບຕ ຂອງບັນດາບໍລິສັດເກັບກູ້ ແລະ ທຳລາຍລະເບີດ. ໄລຍະຜ່ານມາມີບາງບໍລິສັດເກັບກູ້ ລບຕ ໄດ້ຮັບວຽກຈາກໂຄງການຕ່າງໆທີ່ໄປປະຕິບັດວຽກເກັບກູ້ ລບຕ ຢູ່ບັນດາແຂວງ ແຕ່ກົງກັນຂ້າມທັງອົງການປົກຄອງທ້ອງຖິ່ນບໍ່ທັນໄດ້ຮັບແຈ້ງການລົງເຮັດວຽກຈາກ ຄຊກລ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການ ຄຸ້ມຄອງ ຕິດຕາມ.
- ຂໍ້ສະເໜີ ອື່ນໆ ທີ່ກ່ຽວຂ້ອງກັບກອງປະຊຸມ. ບໍລິສັດເກັບກູ້ ລບຕ ສະເໜີເພີ່ມບົດໜຶ່ງເຂົ້າໃນມາດຕະຖານແຫ່ງຊາດກ່ຽວກັບການກວດກາລະເບີດໃຕ້ນ້ຳ.

III. ຂໍ້ສະເໜີ, ຄຳແນະນຳຈາກປະທານກອງປະຊຸ ແລະ ບາງອົງການປະຕິບັດງານ.

1. ຄຊກລ ສະເໜີໃຫ້ອົງການປະຕິບັດງານ ກວດກາຄືນເຄື່ອງກວດລະເບີດ ທີ່ນຳໃຊ້ໃນປະຈຸບັນ, ມີຈັກສະນິດ, ແຕ່ລະສະນິດມີຈັກເຄື່ອງ, ມີຈັກເຄື່ອງທີ່ຍັງໃຊ້ໄດ້ ແລະ ມີຈັກເຄື່ອງທີ່ໝົດອາຍຸການນຳໃຊ້ ແລະ ເປ່ເພ, ພ້ອມກັນນັ້ນມີແຜນຂໍຊື້ໃໝ່ ມີຈັກເຄື່ອງ ສະນິດໃດ. (ຕາມບົດບັນທຶກສະບັບໃດໃຫ້ລະບຸຈະແຈ້ງ).
2. ສະເໜີໃຫ້ອົງການປະຕິບັດງານສົ່ງແຜນປະຕິບັດງານປີ 2023 ແລະ ສະຫຼຸບປະຈຳປີ 2022 (ສຳລັບວຽກງານສຳຫຼວດ, ກວດກູ້ ລບຕ).
3. ເວລາຂຶ້ນແຜນປະຈຳປີແມ່ນສະເໜີໃຫ້ສົມທົບກັບແຂວງ ເມືອງ ບ້ານ ເພື່ອຕອບສະໜອງການກວດກູ້.
4. ໃນການທົບທວນມາດຕະຖານແຫ່ງຊາດແມ່ນສະເໜີໃຫ້ຊ່ຽວຊານກະກຽມມີຄຳເຫັນ ຢູ່ໃນຂໍ້ໃດ ວັກໃດ.
5. ການຈັດບູລິມະສິດໜ້າວຽກກວດກູ້ແມ່ນເລັ່ງໃສ່ພື້ນທີ CHA, ແຕ່ຕ້ອງໄດ້ພິຈາລະນາບາງພື້ນທີ່ບໍ່ແມ່ນ None CHA ທີ່ມີຄວາມຈຳເປັນເຊັ່ນ: ບ່ອນປຸກສ້າງໂຮງຮຽນ, ສຸກສາລາ, ນ້ຳລິນ... ທີ່ຜູ້ໃຫ້ທຶນຕ້ອງການຍັ້ງຍືນກວດກູ້ ລບຕ.
6. ການກຳນົດບຸລິມະສິດສະເໜີໃຫ້ ໜ່ວຍງານກວດກູ້ ນຳໄປແປເປັນພາສາອັງກິດພາຍຫຼັງຮ່າງເປັນພາສາລາວ ແລະ ແຈກຢາຍໃຫ້ພາກສ່ວນທີ່ກ່ຽວຂ້ອງ.
7. ສະເໜີໃຫ້ ອົງການປະຕິບັດງານ ລາຍງານຜົນສຳເລັດການຈັດຕັ້ງປະຕິບັດວຽກສຳຫຼວດ-ເກັບກູ້ ລບຕໃຫ້ ຄຊກລ ໂຄງການກ່ອນຈະປິດໂຄງການ(ຕາມ MoU) ແຕ່ລະສະບັບ.
8. ສະເໜີໃຫ້ບໍລິສັດ ເກັບກູ້ ລບຕ ເມື່ອໄດ້ຮັບວຽກແລ້ວ ເວລາລົງໄປເຮັດວຽກແມ່ນ ໃຫ້ມາຂໍໃບອະນຸຍາດລົງເຮັດວຽກນຳຫ້ອງການ ຄຊກລ ແລະ ແຈ້ງ ແຂວງ, ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ກ່ອນທຸກຄັ້ງ.
9. ສະເໜີໜ່ວຍງານກວດກູ້ ຈັດກອງປະຊຸມວິຊາການແມ່ນໃຫ້ຈັດໃນກາງເດືອນ ຂອງເດືອນສຸດທ້າຍໃນໄຕມາດ 4 ເພື່ອຄວາມສະດວກໃນການເຂົ້າຮ່ວມກອງປະຊຸມຂອງຫຼາຍພາກສ່ວນ.
10. ສະເໜີໃຫ້ ໜ່ວຍງານ ກວດກູ້ ແລະ ໜ່ວຍງານຄຸ້ມຄອງຄຸນນະພາບ ສົມທົບກັນກັບຊ່ຽວຊານ ຕໍ່ກັບລະເບີດທີ່ອົງການເອັນພີເອພົບເຫັນ ຢູ່ສະໜາມກວດກກູ້ທີ່ສຳເລັດໄປແລ້ວໃນເດືອນມີນາ ປີ 2022 ຜ່ານມາ ເຮັດແນວໃດໃຫ້ຮີບຮ້ອນ ແກ້ໄຂ ທຳລາຍໃຫ້ໄວ ແລະ ມີຄວາມປອດໄພ.
11. ການທົດສອບອຸປະກອນປ້ອງກັນຕົວ ແລະ ການກວດກູ້ ລບຕ ກັບ ອົງການຮາໂລແມ່ນສືບຕໍ່ ເພື່ອຈະໄດ້ຜົນ ແລະ ຂໍ້ສະຫຼຸບ ອອກມາທີ່ຊັດເຈນ.
12. ໃຫ້ທຸກພາກສ່ວນກະກຽມບຸກຄະລະກອນຂອງຕົນທີ່ຈະເອົາເຂົ້າຝຶກອົບຮົມວິຊາການທຳລາຍ ລບຕ ຂັ້ນ 4 ໃນໄວນີ້.
13. ເຊີນບັນດາຊ່ຽວຊານຕ່າງປະເທດ ທີ່ມີປະສົບການມາຊ່ວຍການສອນໃນການຝຶກອົບຮົມວິຊາການຂັ້ນສູງ, ທຳອິດຈະໄດ້ຮຽນພາກທິດສະດີ ຈາກນັ້ນຈະໄດ້ລົງສະໜາມຕົວຈິງ.

ອົງການ NPA:

- ແຜນແຜນການທຳລາຍບໍ່ມໃຫ່ຍ MK 82 ແມ່ນຈະໄດ້ເລີ່ມກະກຽມແຕ່ເດືອນມັງກອນເປັນຕົ້ນໄປ ແລະ ຈະນຳສະເໜີແຜນການທຳລາຍເມື່ອສຳເລັດການສ້າງສິ່ງກັງບັງ ແລະ ຂັ້ນຕອນທຳລາຍ.

14. ອົງການ Halo trust:

- ຂໍສະເໜີ ແຕ້ມ CHA ຢູ່ພື້ນທີ່ສຳຫຼວດ ຂອງ HI ທີ່ສຳຫຼວດປິດແລ້ວ, ແຕ່ມີຈຸດຫຼັກຖານລະເບີດຈາກການທຳລາຍລບຕ ຂອງພວກເຮົາທຳຕົກຢູ່ ເຊິ່ງສາມາດກຳນົດເປັນ CHA ໄດ້ບໍ?
- **ອົງການ HI:**
- ອົງການປະຕິບັດແຜນປະຕິບັດງານສຳເລັດຕາມເປົ້າໝາຍ ເຖິງວ່າການເຊັນບົດບັນທຶກຄວາມເຂົ້າໃຈຊັກຊ້າ.

15. ອົງການ MAG:

- ສະເໜີໃຫ້ ທ່ານ ພົມມະຈັນ ແລະ ວິໄລສັກ ບົດລາຍງານທີ່ທ່ານວິໄລສັກສະເໜີມານັ້ນແມ່ນສະເພາະ ອົງການບໍ່ ຫຼື ລວມ. ການປັກຫຼັກໝາຍແມ່ນຢາກໃຫ້ອົງການປະຕິບັດງານປັກແບບໃດ ສະເໜີໃຫ້ລະບຸ ແລະ ຈະໄດ້ປະຕິບັດພ້ອມກັນ.

V. ຂໍ້ຕົກລົງພາຍໃນກອງປະຊຸມ

- ເຫັນດີໃຫ້ຈັດກອງປະຊຸມວິຊາການ ໃນຕົ້ນເດືອນສຸດທ້າຍຂອງໄຕມາດທີ 4 ເພາະ ຜູ້ເຂົ້າຮ່ວມສ່ວນຫຼາຍຈະກັບໄປພັກຜ່ອນຊ່ວງປີໃໝ່.
- ສະເໜີໃຫ້ອົງການປະຕິບັດງານສົ່ງແຜນປະຕິບັດງານທຸກໆໄຕມາດ.
- ເຫັນດີ ເວລາຂຶ້ນແຜນປະຈຳປີແມ່ນໃຫ້ ອົງການປະຕິບັດງານສົມທົບກັບ ແຂວງ ເມືອງ ບ້ານ ເພື່ອຈະໄດ້ຮັບແຜນທີ່ຊັດເຈນ.
- ການທົບທວນມາດຕະຖານແຫ່ງຊາດ ສະເໜີໃຫ້ຊ່ຽວຊານກະກຽມໄວ້ ຈະປັບປຸງຢູ່ໃນວັກໃດ, ຈຸດໃດ.
- ການກຳນົດບູລິມະສິດ ສະເໜີໃຫ້ໜ່ວຍງານ ກວດກູ້ ນຳໄປແປ ແລ້ວແຈກຢາຍໃຫ້ວິຊາການມີຄຳເຫັນ.
- ກ່ອນຈະສະຫຼຸບໂຄງການແມ່ນໃຫ້ສົ່ງບົດລາຍງານໃຫ້ຫ້ອງການ ຄຊກລ ໄດ້ຄົ້ນຄ້ວາກ່ອນ.
- ສະເໜີໃຫ້ບັນດາບໍລິສັດ ເມື່ອໄດ້ຮັບວຽກແລ້ວແມ່ນໃຫ້ມາຂໍໃບນຸມັດຈາກ ຫຄຊກລ ກ່ອນລົງເຮັດວຽກ ແລະ ແຈ້ງໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ເມືອງ ທຸກໆຄັ້ງ ພ້ອມທັງປະຕິບັດຕາມລະບຽບມາດຕະຖານທີ່ວາງໄວ້.

V. ສະຫຼຸບ

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄຳຂອບໃຈ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານຕ່າງໆ ທີ່ເຂົ້າຮ່ວມກອງປະຊຸມ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 16:00 ໂມງ ຂອງວັນທີ 23 ທັນວາ 2022.

ຫົວໜ້າຫ້ອງການ ຄຊກລ	**ໜ່ວຍງານຄຸ້ມຄອງສຳຫຼວດ-ເກັບກູ້ ລບຕ**